# ໐໗. ຊຽງໝ້ຽງຕິຊ້າງພຍາ

ພຍາມີຄໍາສັ່ງໃຫ້ເຂົາ ໄປເລືອກຊ້າງທີ່ເປັນມິ່ງມຸງຄຸນເຂົ້າມາໃນສນາມຫລວງ, ຈຶ່ງໄປເລືອກຊ້າງພາຍວັນ ຕົວປະເສີດ ມີຮູບຮ່າງສວຍງາມປານວ່າແຕ້ມເອົາ , ໝາຍຄວາມວ່າທົ່ວຕົວຊ້າງໂຕນີ້ບໍ່ມີບ່ອນໃດຕິ ງາມໄປໝົດນັບແຕ່ຂົນພຸ້ນແລະ . ເມື່ອເລືອກໄດ້ເຂົາກໍນໍາເອົາ ມາທວາຍທ່ານພຍາ ຄວນຊ້າງກໍປະດັບເອີ້ຍ້ອງຕື່ມຍິ່ງງາມຂຶ້ນ.

ໄດ້ຂ່າວວ່າພຍາໄດ້ຊ້າງຕົວປະເສີດງາມເລີດ ມິ່ງມຸງຄຸນ ມາໄວ້ວັງ . ຊຽງໝ້ຽງມັນກໍຟ້າວໄປເບິ່ງຄືກັນກັບຊາວບ້ານຊາວເມືອງທົ່ວໄປ, ເມື່ອໄປຮອດໂຕຊ້າງ ຊຽງໝ້ຽງມັນກໍທໍາທ່າແລ່ນອ້ອມພຸ້ນອ້ອມພີ້ ແລ້ວກໍຍົກຍ້ອງ ຊົມເຊີຍນໍາໝູ່ວ່າ ຊ້າງນີ້ເບິ່ງແລ້ວກໍງາມດີຢູ່ດອກ, ຕິແຕ່ຕາມັນນ້ອຍບໍ່ສົມໂຕ ທໍາກໍບໍ່ມີ ຂົນກໍເສັ້ນນ້ອຍ ຕັ້ງແຕ່ງົວ ຄວາຍ ຕາມັນກໍຍັງສົມໂຕ ທໍາກໍມີ , ເວົ້າແຕ່ຊ້າງ ນີ້ຕາມັນ ຢ່າງນ້ອຍກໍຕ້ອງທໍ່ໝ່ວຍໝາກເຫວີ່ ຈຶ່ງສົມນໍາ້ສົມເນື້ອ, ພຍາໄດ້ຟັງກໍເຫັນຄືຄວາມ ຊຽງໝ້ຽງວ່ານັ້ນແມ່ນແທ້ !!!!!!!

*ອ່ານຕໍ່ເຣື່ອງທີ່ແປດ ໃນເດືອນໜ້າ*

໐໘, ຊຣຽງໝ້ຣຽງໄປໃຫ້ນໍາຣາຊຄຣູ